ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

*****

ທະນາຄານແຫ່ງ ສ.ປ.ປ. ລາວ

ເລກທີ 330/ທຫລ
ນະຄອນຫຼວງວຽງຈັນ, ວັນທີ 02 JUL 2007

## ຂໍ້ຕົກລົງ
## ວ່າດ້ວຍຂອບເຂດການໃຫ້ສິນເຊື່ອຂອງທະນາຄານທຸລະກິດ

- ອີງຕາມກົດໝາຍວ່າດ້ວຍທະນາຄານ ແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ, ລົງວັນທີ 19/10/1999.
- ອີງຕາມກົດໝາຍວ່າດ້ວຍທະນາຄານທຸລະກິດ ສະບັບເລກທີ 03/ສພຊ, ລົງວັນທີ 26/12/2006.
- ອີງຕາມຂໍ້ກຳນົດການໃຫ້ເງິນກູ້ແກ່ລູກຄ້າລາຍໃຫຍ່ຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນ ທີ່ຂຶ້ນກັບ ທະນາຄານ ແຫ່ງ ສປປ ລາວ ສະບັບເລກທີ 03/ທຫລ, ລົງວັນທີ 15/01/1996 .
- ອີງຕາມການຄົ້ນຄວ້າ ແລະ ນຳສະເໜີຂອງກົມຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ.

**ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ ອອກຂໍ້ຕົກລົງ:**

**ມາດຕາ 1. ຈຸດປະສົງ**

ເພື່ອຮັບປະກັນຄວາມໝັ້ນຄົງຂອງທະນາຄານທຸລະກິດ ໂດຍກຳນົດຂອບເຂດການໃຫ້ສິນເຊື່ອແກ່ບຸກຄົນ ຫຼື ກຸ່ມບຸກຄົນໃດໜຶ່ງ, ແນໃສ່ກະຈາຍສິນເຊື່ອ ເພື່ອຫຼຸດຜ່ອນຄວາມສ່ຽງ, ຮັບປະກັນການປ່ອຍສິນເຊື່ອໃຫ້ມີຄຸນນະພາບ ແລະ ສາມາດຕອບສະໜອງຄວາມຮຽກຮ້ອງຕ້ອງການທາງດ້ານສິນເຊື່ອໄດ້ຢ່າງທົ່ວເຖິງ.

**ມາດຕາ 2. ອະທິບາຍຄຳສັບ**

2.1 "ທຶນ" ໝາຍເຖິງ ທຶນຊັ້ນ 1 ຂອງທະນາຄານທຸລະກິດ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງ ສະບັບເລກທີ 135/ທຫລ, ລົງວັນທີ 20/03/2007.

2.2 "ບຸກຄົນ" ໝາຍເຖິງ ບຸກຄົນທົ່ວໄປ ຫຼື ນິຕິບຸກຄົນ ໃດໜຶ່ງ.

2.3 "ກຸ່ມບຸກຄົນ" ໝາຍເຖິງ ບຸກຄົນທີ່ມີຈຳນວນແຕ່ 2 ບຸກຄົນຂຶ້ນໄປ ແລະ ໃຫ້ຖືວ່າເປັນບຸກຄົນດຽວກັນ ຖ້າຫາກ:
- ບຸກຄົນໃດໜຶ່ງມີອຳນາດຄວບຄຸມໂດຍກົງ ຫລື ທາງອ້ອມ ຕໍ່ບຸກຄົນອື່ນພາຍໃນກຸ່ມ ໂດຍມີຮຸ້ນ ແຕ່ 20% ຂຶ້ນໄປຂອງຈຳນວນຮຸ້ນທັງໝົດທີ່ມີສິດອອກສຽງ;
- ບັນດາບຸກຄົນດັ່ງກ່າວ ນອນຢູ່ໃນກຸ່ມດຽວກັນ, ມີສາຍພົວພັນພາຍໃນກຸ່ມໂດຍຖືກຳມະສິດຮ່ວມກັນ, ມີຜູ້ບໍລິຫານຄົນດຽວກັນ, ໃຫ້ການຄ້ຳປະກັນຊຶ່ງກັນ ແລະ ກັນ.

2.4 "ລູກຄ້າລາຍໃຫຍ່" ໝາຍເຖິງ ບຸກຄົນ ຫຼື ກຸ່ມບຸກຄົນ ທີ່ທະນາຄານໃຫ້ສິນເຊື່ອ ແຕ່10% ຂອງທຶນຂຶ້ນໄປ.

2.5 "ສິນເຊື່ອ" ໝາຍເຖິງ ເງິນກູ້ ຫຼື ພາລະຜູກພັນທາງການເງິນ ທີ່ທະນາຄານໃຫ້ກັບລູກຄ້າ.

2.6 "ເງິນກູ້" ໝາຍເຖິງ ຈຳນວນເງິນທີ່ທະນາຄານປ່ອຍກູ້ ໃຫ້ແກ່ບຸກຄົນ ຫຼື ກຸ່ມບຸກຄົນໃດໜຶ່ງ ຊຶ່ງບັນທຶກໄວ້ໃນ ແລະ ນອກໃບສະຫຼຸບຊັບສົມບັດ ເຊັ່ນ: ເງິນກູ້ທຳມະດາ(Loan), ເງິນເບີກເກີນບັນຊີ (OD), ເງິນຈ່າຍລ່ວງໜ້າໃຫ້ແກ່ລູກຄ້າ(Advance), ເງິນກູ້ປ່ອຍຮ່ວມກັບທະນາຄານອື່ນ (Syndicated Loan).

2.7 "ພາລະຜູກພັນທາງການເງິນ" ໝາຍເຖິງ ຂໍ້ຜູກພັນໃນສັນຍາທີ່ທະນາຄານສັນຍາຈະໃຫ້ກັບລູກຄ້າ ໃນອານາຄົດ ຊຶ່ງບັນທຶກຢູ່ນອກໃບສະຫຼຸບຊັບສົມບັດ ເຊັ່ນ: ໜັງສືສິນເຊື່ອ(L/C), ໜັງສືຄ້ຳປະກັນ(B/G, L/G), ໜັງສືຮັບຮອງ(Aval/Acceptance, Advance Payment Garantee) ແລະ ອື່ນໆ.

## ມາດຕາ 3. ຂອບເຂດການໃຫ້ສິນເຊື່ອແກ່ບຸກຄົນ, ກຸ່ມບຸກຄົນ, ແລະ ລູກຄ້າລາຍໃຫຍ່

ທະນາຄານທຸລະກິດ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງທະນາຄານ ແຫ່ງ ສປປ ລາວ ສາມາດປ່ອຍສິນເຊື່ອໃຫ້ແກ່ລູກຄ້າຂອງຕົນຕາມທີ່ໄດ້ກຳນົດໄວ້ ດັ່ງນີ້:

3.1 ການໃຫ້ສິນເຊື່ອປະເພດໃດໜຶ່ງ ຫຼື ຫຼາຍປະເພດລວມກັນ ແກ່ບຸກຄົນໃດໜຶ່ງ ຕ້ອງບໍ່ເກີນ 25% ຂອງທຶນ.

3.2 ການໃຫ້ສິນເຊື່ອປະເພດໃດໜຶ່ງ ຫຼື ຫຼາຍປະເພດລວມກັນ ແກ່ກຸ່ມບຸກຄົນໃດໜຶ່ງ ຕ້ອງບໍ່ເກີນ 50% ຂອງທຶນ.

3.3 ການໃຫ້ສິນເຊື່ອຕາມຂໍ້ 3.1 ແລະ 3.2, ໃນກໍລະນີມີຫຼາຍວົງເງິນ ແມ່ນໃຫ້ເອົາຍອດລວມຂອງວົງເງິນອະນຸມັດໃໝ່ບວກໃຫ້ຍອດເຫຼືອຂອງວົງເງິນບ້ອງເກົ່າ.

3.4 ການໃຫ້ສິນເຊື່ອເກີນຂອບເຂດຕາມຂໍ້ 3.1 ແລະ 3.2 ນັ້ນ, ທະນາຄານທຸລະກິດຕ້ອງໄດ້ຮ່ວມກັບທະນາຄານທຸລະກິດ ຫຼື ສະຖາບັນການເງິນອື່ນປ່ອຍຮ່ວມກັນ ແລະ ຕ້ອງລາຍງານໃຫ້ທະນາຄານ ແຫ່ງ ສປປ ລາວ ຊາບ.

3.5 ການໃຫ້ສິນເຊື່ອແກ່ບັນດາລູກຄ້າລາຍໃຫຍ່ ເມື່ອລວມເຂົ້າກັນທັງໝົດຕ້ອງບໍ່ເກີນ 8 ເທົ່າ ຫຼື 800% ຂອງທຶນ.

## ມາດຕາ 4. ຂອບເຂດການໃຫ້ສິນເຊື່ອລະຫວ່າງທະນາຄານທຸລະກິດ

ການໃຫ້ສິນເຊື່ອຂອງທະນາຄານທຸລະກິດ ແກ່ທະນາຄານທຸລະກິດ ຫຼື ສະຖາບັນການເງິນອື່ນ ຕ້ອງບໍ່ເກີນ 50% ຂອງທຶນ.

## ມາດຕາ 5. ຂໍ້ຍົກເວັ້ນ ກ່ຽວກັບຂອບເຂດການໃຫ້ສິນເຊື່ອ

ການໃຫ້ສິນເຊື່ອຕາມມາດຕາ 3 ແລະ 4 ແມ່ນບໍ່ລວມເອົາການໃຫ້ສິນເຊື່ອ ທີ່ຖືກຄ້ຳປະກັນໂດຍ:

5.1 ວັດຖຸມີຄ່າ (ເພັດ, ພອຍ, ຄຳ, ຄຳຂາວ, ເງິນ) ຕາມມູນຄ່າຕົວຈິງຂອງທ້ອງຕະຫຼາດ.

5.2 ເງິນຝາກຢູ່ທະນາຄານທຸລະກິດ ຊຶ່ງເປັນສະກຸນດຽວກັນກັບສິນເຊື່ອ.

5.3 ລັດຖະບານ ແຫ່ງ ສປປ ລາວ ຫຼື ພັນທະບັດຂອງລັດຖະບານ.

ສຳລັບສາຂາທະນາຄານທຸລະກິດຕ່າງປະເທດ ທີ່ໄດ້ຮັບອະນຸຍາດໃຫ້ເຄື່ອນໄຫວທຸລະກິດ ຢູ່ໃນ ສປປ ລາວ ແມ່ນຍົກເວັ້ນການປະຕິບັດມາດຕາ 3 ແລະ 4, ແຕ່ຕ້ອງລາຍງານໃຫ້ທະນາຄານ ແຫ່ງ ສປປ ລາວ ຊາບເປັນແຕ່ລະກໍລະນີ.

## ມາດຕາ 6. ຫຼັກຊັບຄ້ຳປະກັນ

6.1 ການໃຫ້ສິນເຊື່ອຂອງທະນາຄານທຸລະກິດ ຕ້ອງບໍ່ເກີນ 90% ຂອງມູນຄ່າຫຼັກຊັບຄ້ຳປະກັນ ຕາມມູນຄ່າຕົວຈິງຂອງທ້ອງຕະຫຼາດ.

6.2 ການຈົດຈຳນອງຫຼັກຊັບຄ້ຳປະກັນ ແມ່ນໃຫ້ອີງໃສ່ທີ່ຕັ້ງ, ຫຼັກຊັບຕັ້ງຢູ່ທ້ອງຖິ່ນໃດໃຫ້ຈົດທະບຽນຢູ່ທ້ອງຖິ່ນນັ້ນ.

## ມາດຕາ 7. ຄວາມຮັບຜິດຊອບຕໍ່ການໃຫ້ສິນເຊື່ອຂອງທະນາຄານທຸລະກິດ

7.1 ຜູ້ບໍລິຫານ, ພະນັກງານສິນເຊື່ອ ຫລື ພະນັກງານຜູ້ທີ່ກ່ຽວຂ້ອງ ຕ້ອງຮັບຜິດຊອບຕໍ່ຄວາມສ່ຽງທັງໝົດທີ່ເກີດຂຶ້ນ ແລະ ຈະເກີດຂຶ້ນຈາກການປ່ອຍສິນເຊື່ອ.

7.2 ຖ້າເງິນກູ້ທີ່ປ່ອຍໄປນັ້ນ ກາຍເປັນໜີ້ບໍ່ເກີດດອກອອກຜົນ (NPLs) ທະນາຄານທຸລະກິດຕ້ອງເປັນຜູ້ຕິດຕາມ ແລະ ແກ້ໄຂຕາມລະບຽບການ ແລ້ວລາຍງານຜົນການແກ້ໄຂນັ້ນໃຫ້ທະນາຄານ ແຫ່ງ ສປປ ລາວ ຊາບເປັນປະຈຳແຕ່ລະໄຕມາດ.

7.3 ຖ້າທະນາຄານທຸລະກິດໃດ ບໍ່ລາຍງານກ່ຽວກັບໜີ້ບໍ່ເກີດດອກອອກຜົນ (NPLs) ຕາມຂໍ້ 7.2 ໃຫ້ທະນາຄານ ແຫ່ງ ສປປ ລາວ ຊາບ ຫຼື ມີເຈດຕະນາປົກປິດຂໍ້ມູນດັ່ງກ່າວ, ຫາກກວດພົບຈະຖືກປະຕິບັດມາດຕະການຕາມລະບຽບການທີ່ທະນາຄານ ແຫ່ງ ສປປ ລາວ ວາງອອກແຕ່ລະໄລຍະ.

## ມາດຕາ 8. ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ໃຊ້ປ່ຽນແທນຂໍ້ກຳນົດ ສະບັບເລກທີ່ 03/ທຫລ, ລົງວັນທີ 15 ມັງກອນ 1996 ແລະ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ

ທະນາຄານແຫ່ງ ສ.ປ.ປ ★ ຜູ້ວ່າການ ★

**ສຸເພັດ ຄຳພູນວົງ**